**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0287/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 05 FEB 2021

## ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ຜົນການໂອນຮຸ້ນ ຜ-ຟຟລ ທີ່ ລັດວິສາຫະກິດໄຟຟ້າລາວ ຖືຄອງ ຈຳນວນ 24% ໃຫ້ແກ່ ບໍລິສັດ ພົງຊັບທະວີກໍ່ສ້າງ ຂົວ-ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍ, ສະບັບເລກທີ 04/ຄຄຊ, ລົງວັນທີ 28/01/2019
- ອີງຕາມ ຫນັງສືແຈ້ງຕອບ ກ່ຽວກັບການສະເຫນີຊື້ຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂອງ ບໍລິສັດພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ສະບັບເລກທີ 187/ສຄຄຊ, ລົງວັນທີ 30 ກັນຍາ 2020;
- ອີງຕາມບົດລາຍງານຜົນການໂອນຮຸ້ນ ຜ-ຟຟລ ຂອງ ບໍລິສັດ ພົງຊັບທະວີ ກໍ່ສ້າງ ຂົວ-ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ, ສະບັບເລກທີ 618/ພຊວ, ລົງວັນທີ 08/10/2020;
- ອີງຕາມຫນັງສືນຳສົ່ງສັນຍາການໂອນຮຸ້ນລະຫວ່າງ ລັດວິສາຫະກິດໄຟຟ້າລາວ ແລະ ບໍລິສັດ ພົງຊັບທະວີກໍ່ສ້າງ ຂົວ-ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ, ສະບັບເລກທີ 0396/ຟຟລ.ຝຜງ, ລົງວັນທີ 04/02/2021.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ: ການໂອນຮຸ້ນ ຜ-ຟຟລ ທີ່ ລັດວິສາຫະກິດໄຟຟ້າລາວ (ຟຟລ) ຖືຄອງ ຈຳນວນ 403.032.887 ຮຸ້ນ ຫລື ເທົ່າກັບ 24% ໃຫ້ແກ່ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ແມ່ນໄດ້ສຳເລັດແລ້ວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,

**ຜູ້ອຳນວຍການໃຫຍ່**

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

**ດວງສີ ພາຣາຍົກ**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ 2392, ໂທລະສັບ:(856-21) 316142
ແຟັກ: (856-21) 316141. ອີເມວ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la